ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************************

ກະຊວງແຜນການ ແລະ ການລົງທຶນ

ເລກທີ: 2277 /ຜທ.ຮມສ-ສປຊ

ນະຄອນຫຼວງວຽງຈັນ, 09 OCT 2009

# ຈົດໝາຍເຊີນ

ຮຽນ: ..........................................................................................

..........................................................................................

..........................................................................................

ສືບຕໍ່ຈົດໝາຍຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບ ລົງວັນທີ 31 ສິງຫາ 2009, ໃນນາມລັດຖະບານ ແຫ່ງ ສປປ ລາວ ຂ້າພະເຈົ້າຂໍຖືເປັນກຽດເຊີນ ທ່ານ ເຂົ້າຮ່ວມກອງປະຊຸມການຈັດຕັ້ງປະຕິບັດຂະບວນ ການໂຕະມົນຊຶ່ງຈະໄດ້ຈັດຂຶ້ນໃນວັນອັງຄານ ວັນທີ 03 ພະຈິກ 2009 ທີ່ ສູນການຮ່ວມມືສາກົນ ແລະ ຝຶກອົບຮົມ ( ICTC ), ນະຄອນຫຼວງວຽງຈັນ.

ຄືດັ່ງກອງປະຊຸມໂຕະມົນທີ່ຜ່ານມາ, ເປັນກຽດກ່າວໄຂກອງປະຊຸມໂດຍ ພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ມີບັນດາທ່ານລັດຖະມົນຕີວ່າການ/ລັດຖະມົນ ຕີຊ່ວຍວ່າການ ແລະ ບັນດາຜູ້ຕ່າງໜ້າຂອງອົງການ/ປະເທດທີ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ເຂົ້າຮ່ວມກອງປະຊຸມ ເພື່ອປຶກສາຫາລືກ່ຽວກັບຄວາມຄືບໜ້າ, ສິ່ງທ້າທາຍ ແລະ ບູລິມະສິດຂອງວຽກງານການພັດທະນາ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອທົບທວນຜົນຂອງການຈັດຕັ້ງປະຕິບັດຂໍ້ສະເໜີຕ່າງໆໃນກອງປະຊຸມໂຕະມົນປີທີ່ຜ່ານມາ ແລະ ປຶກສາຫາລື ກ່ຽວກັບ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7 ເພື່ອເປັນການກະກຽມສໍາລັບກອງປະຊຸມໂຕະມົນໃຫຍ່ໃນປີໜ້າ. ນອກຈາກນີ້ ບັນດາກະຊວງຂະແໜງການຕ່າງໆ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງຈະໄດ້ກະກຽມ ແລະ ນໍາສະເໜີ ປະກອບຄໍາເຫັນໃນຫົວຂໍ້ສະເພາະ ຄືດັ່ງທີ່ໄດ້ລະບຸໄວ້ໃນວາລະກອງປະຊຸມ.

ເພື່ອເປັນຂໍ້ມູນຮັບໃຊ້ໃຫ້ແກ່ກອງປະຊຸມການຈັດຕັ້ງປະຕິບັດຂະບວນການໂຕະມົນ 2009 ເອກະສານພື້ນ ຖານ (Main Background Document) ຈະໄດ້ສັງລວມເອົາຜົນຂອງກອງປະຊຸມປຶກສາຫາລື (Preconsultation), ກອງປະຊຸມຂອງ ໜ່ວຍງານຂະແໜງການປຶກສາຫາລືກັບຜູ້ໃຫ້ທຶນ (SWGs) ແລະ ການປະເມີນຄວາມຄືບໜ້າ ແລະ ສິ່ງທ້າທາຍໃນຂົງເຂດວຽກງານການພັດທະນາ ແລະ ຈະຖືກລົງໃນເວບໄຊ ຂອງໂຕະມົນ (www.rtm.org.la) ໃນວັນທີ 28 ຕຸລາ 2009.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ທ່ານ ທີ່ໄດ້ສືບຕໍ່ໃຫ້ການສະໜັບສະໜູນ ແລະ ຫວັງຢ່າງຍິ່ງວ່າທ່ານຄົງຈະ ສະຫຼະ ເວລາ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ຂໍສະແດງຄວາມນັບຖືມາຍັງບັນດາທ່ານ ນະທີ່ນີ້ດ້ວຍ.

ສົມລະວົງ ຄູດໄພທູນ

ລັດຖະມົນຕີວ່າການກະຊວງແຜນການແລະການລົງທຶນ

ເອກະສານຄັດຕິດ: ວາລະກອງປະຊຸມການຈັດຕັ້ງປະຕິບັດຂະບວນການໂຕະມົນ 2009